# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 28 ພຶສພາ 2023 (05-28-2023)

---

## ຫຼີກເວັ້ນຈາກວິນຍານແຫ່ງການຕິຕຽນ

*ເມື່ອໃດທ່ານໄດ້ຕິຕຽນບາງສິ່ງບາງຢ່າງແຕ່ຕໍ່ມາໄດ້ປຸ່ງນໃຈ?*

**ຈຸດສຳຄັນໃນບົດຮຽນ**: ຈົ່ງປ້ອງກັນໃຈຂອງທ່ານຈາກການຕິຕຽນຄົນອື່ນ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເປັນເວລາຊາວກວ່າປີມາແລ້ວ, ແຕ່ຂ້າພະເຈົ້າຍັງຈຳອີແມວນັ້ນ. ພວກເຮົາໄດ້ປະກາດການຕັດສິນໃຈການຮັບໃຊ້ທີ່ຫຼູ້ງຍາກຂອງໂບດ, ແລະຂ້າພະເຈົ້າກໍຄິດວ່າມີບາງຄົນອາດບໍ່ພໍໃຈ, ຂ້າພະເຈົ້າບໍ່ໄດ້ຕຽມພ້ອມໃນສິ່ງທີ່ຂ້າພະເຈົ້າຈະໄດ້ຮັບສິ່ງຈະຕາມມາ: ເປັນອີແມວທີ່ຍາວ-ຍາວຍືດຈາກສະມາຊິກໂບດຜູ້ນຶ່ງ, ເຕັມໄປດ້ວຍຄຳເວົ້າທີ່ຈະປຸ່ງນຟິມຮູບເງົາຈາກທັມມະດາ PG-13 ໄປສູ່ຄວາມຮຸນແຮງລະດັບຂັ້ນ R. ມັນເຕັມໄປດ້ວຍຄວາມໂກດແຄ້ນທີ່ບໍ່ໜ້າເຊື່ອ, ຈົນເຖິງກັບຖາມຫາໃບຢັ້ງຢືນຖານະການເປັນສິດຍາພິບານຂອງຂ້າພະເຈົ້າ.

ຂອບຄຸນພຣະເຈົ້າທີ່ລາວແລະຂ້າພະເຈົ້າສາມາດເຂົ້າຫາກັນແລະໂອ້ລົມກ່ຽວກັບເລື່ອງນີ້. ໃນເວລາດຽວກັນ, ຂ້າພະເຈົ້າມັກຈະກັບມາຫາສິ່ງນັ້ນເປັນການເຕືອນສະຕິກ່ຽວກັບຜົນກະທົບຂອງການຕິຕຽນແບບນີ້. ເພື່ອໃຫ້ແຈ້ງຂາວ, ມັນບໍ່ແມ່ນວ່າຂ້າພະເຈົ້າຢູ່ເໜືອການຕິຕຽນນັ້ນ, ແທນທີ່, ວິທີທີ່ຄົນນັ້ນຕອບໂຕ້ອາດເປັນເຫດກໍ່ໃຫ້ເກີດຄວາມເສັຽຫາຍຢ່າງໜັກຕໍ່ຄວາມສຳພັນຂອງພວກເຮົາແລະງານທີ່ໃຫຍ່ກວ່າສຳລັບອານາຈັກຂອງພຣະເຈົ້າ.

ມີບ່ອນທີ່ຈະປະເຊີນໜ້າກັບຄົນອື່ນຢ່າງສັດຊື່ຕໍ່ກັນຄືຕໍ່ເມື່ອເຮັດດ້ວຍຄວາມຮັກແລະຄວາມເມດຕາ. ແຕ່ຄວາມເປັນຜູ້ໃຫຍ່ໝາຍເຖິງການຮູ້ຈັກຫັກຫ້າມໃຈຂອງພວກເຮົາຈາກການຕິຕຽນທີ່ບໍ່ເປັນປໂຍດ ດັ່ງທີ່ພວກເຮົາຈະໄດ້ຮຽນໃນເລື່ອງຂອງມີຣີອາມ ແລະ ອາໂຣນຕິຕຽນໂມເຊຕໍ່ໄປນີ້.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, 3,)

### ການສຶກສາພຣະຄັມພີ

**1. <u>ຈົດບັນຊີ 12:1-3</u>.**

*[1] ມີຣີອາມແລະອາໂຣນໄດ້ເວົ້າຕິຕຽນໂມເຊ ເຫດຍິງຄົນກູເຊທີ່ເພິ່ນໄດ້ແຕ່ງງານນຳ ເພາະໂມເຊໄດ້ແຕ່ງງານກັບຍິງຄົນກູເຊຄົນນຶ່ງ.*
*[2] ພວກເຂົາທັງສອງກ່າວວ່າ "ພຣະຜູ້ເປັນເຈົ້າກ່າວທາງໂມເຊຄົນດຽວເທົ່ານັ້ນຈິງຫລື ພຣະອົງບໍ່ຊົງກ່າວທາງເຮົານຳຫລື" ພຣະຜູ້ເປັນ*
*ເຈົ້າຊົງໄດ້ຍິນ. [3] (ໂມເຊເປັນຄົນຖ່ອມໃຈຫລາຍຍິ່ງກວ່າຄົນທັງປວງທີ່ເທິງແຜ່ນດິນ).*

ວິນຍານຈົ່ມແລະຕິຕຽນເປັນເຄື່ອງໝາຍທີ່ຄຸ້ນເຄີຍຂອງຊາວອິສຣາເອນຕລອດການເດີນທາງໃນທະເລຊາຍ. ປະຊາຊົນບໍ່ມີຄວາມສາມາດຊອກຫາແນວຈົ່ມທີ່ຮ້າຍແຮງເພື່ອຟ້ອງ-ນິ້ວມືຂອງເຂົາມັກຈະຊີ້ໃສ່ຜູ້ນຳຂອງເຂົາ,ໂມເຊ. ໃນຈົດບັນຊີ 12 ພວກເຮົາພົບວ່າທ່າທີຕໍ່ໂມເຊນີ້ ກໍຖືກນຳມາໃຊ້ດ້ວຍຜູ້ນຳສອງຄົນຂອງເຂົາ, ມີຣີອາມແລະອາໂຣນ. ມີຣີອາມມີຊື່ຈົດໄວ້ກ່ອນໝູ່, ບົ່ງບອກວ່ານາງເປັນເໜືອນຜູ້ນຳພາໃນການຕິຕຽນນີ້. ເອື້ອຍອ້າຍຂອງໂມເຊໄດ້ຕິຕຽນນ້ອງຊາຍຍ້ອນການແຕ່ງງານຂອງເພິ່ນກັບຍິງຊາວກູເຊ. ມັນບໍ່ແຈ່ມແຈ້ງວ່າ

ໝາຍເຖິງນາງຊິບໂປຣາ, ລູກສາວຂອງເຢດໂຣຫຼືບໍ່ (ອົພຍົບ 2:21) ຫຼືຄົນໃດຄົນນຶ່ງທີ່ໂມເຊໄດ້ແຕ່ງງານຫຼັງຈາກຊິບໂປຣາຕາຍ. ຄົນກູເຊອາດໝາຍຄວາມວ່ານາງມາຈາກດິນແດນເອຕີໂອເປຍສມັຍນີ້, ແຕ່ຊາວກູເຊບາງຄັ້ງກໍມີຄວາມສັມພັນກັບຊາວມີດີອານ (ຮາບາກຸກ 3:7), ດິນທີ່ຊິບໂປຣາມາຈາກນັ້ນ. ນາງເປັນໃຜກໍຕາມ, ພວກເຮົາຮູ້ແນ່ວ່າມີຣີອາມແລະອາໂຣນດູຖູກໂມເຊຍ້ອນການແຕ່ງງານນີ້. ຄົນເຜົ່າພັນຂອງນາງຕ່າງໝູ່-ນາງບໍ່ແມ່ນຄົນອິສຣາເອນ-ແນ່ນອນເປັນສາເຫດການຕິຕຽນຂອງມີຣີອາມແລະອາໂຣນ.

ການຕິຕຽນການແຕ່ງງານຂອງໂມເຊນີ້ເປັນພຽງຄວັນບັງຕາຊື່ໆ. ຈົດບັນຊີ 12:2 ເປີດເຜີຍວ່າການເຍາະເຍີ້ຍຂອງເຂົາມີແຮງຈູງໃຈກົດດັນເລິກກວ່ານັ້ນ. *"ພຣະຜູ້ເປັນເຈົ້າກ່າວທາງໂມເຊຄົນດຽວເທົ່ານັ້ນຈິງຫລື ພຣະອົງບໍ່ຊົງກ່າວທາງເຮົາບໍາຫລື"(ຂໍ້ 2).* ບາງເທື່ອເຂົາອາດອິດສາຖານະອັນສູງສົ່ງຂອງໂມເຊເມື່ອຊາວອິສຣາເອນຍອມຮັບເປັນຜູ້ນໍາ. ບາງທີເຂົາອາດຮູ້ສຶກນ້ອຍໃຈ ຫຼືພວກເຂົາບໍ່ໄດ້ຮັບຄເຣດິດພຽງພໍສໍາລັບຜົນສໍາເຣັດຂອງເຂົາເອງ. ບໍ່ວ່າຈະເປັນເຫດຜົນໃດກໍແລ້ວແຕ່, ຈິດວິນຍານຕິຕຽນຂອງເຂົາຕໍ່ໂມເຊລຸກເປັນໄຟຍ້ອນການສົມທຽບຕົວເຂົາກັບນ້ອງຊາຍຂອງເຂົາ.

*ມີສະພາບການປະເພດໃດແດ່ທີ່ພາໃຫ້ເຮົາຕິຕຽນຄົນອື່ນ?*

ເປັນເຣື່ອງແປກ, ຈາກສິ່ງທີ່ເຮົາຮູ້ເຖິງຄວາມຖ່ອມຕົວຂອງໂມເຊ, ເພິ່ນອາດຈະມີຄວາມປາຖນາຢ່າງແຮງກ້າທີ່ຈະແບ່ງປັນບົດບາດກັບເອື້ອຍອ້າຍຂອງເພິ່ນ. ໃນການປຽບທຽບຕົນເອງກັບໂມເຊ, ເຂົາໄດ້ສູນເສັຽການເບິ່ງບໍ່ເຫັນວ່າພຣະຜູ້ເປັນເຈົ້າກໍໄດ້ໃຊ້ເຂົາເໝືອນກັນ. ຕົວຢ່າງ, ມີຫຼາຍຄົນຮັບຮູ້ມີຣີອາມຖານະຜູ້ທໍານວາຍຜູ້ຊຶ່ງໄດ້ຮ້ອງເພງທີ່ມີຣິດອໍານາດຍົກຍ້ອງພຣະຜູ້ເປັນເຈົ້າທີ່ໄດ້ກອບກູ້ເຂົາຈາກພວກທີ່ຕາມລ່າເຂົາ(ອພຍ15:20-21). ອາໂຣນເປັນປາກສຽງແທນໂມເຊຕໍ່ໜ້າຟາຣາໂອ ແລະຖືກແຕ່ງຕັ້ງໃຫ້ເປັນປະໂຣຫິດໃຫ່ຍຄົນທໍາອິດຂອງພຣະຜູ້ເປັນເຈົ້າ. ແຕ່ໜ້າເສົ້າໃຈ, ຍ້ອນເຂົາຕິດຢູ່ກັບວິທີທີ່ພຣະຜູ້ເປັນເຈົ້າເວົ້າຜ່ານທາງໂມເຊ ເຂົາເລີຍລືມວິທີທີ່ສໍາຄັນທີ່ພຣະຜູ້ເປັນເຈົ້າໄດ້ເວົ້າຜ່ານເຂົາເພື່ອນໍາພາຊາວອິສຣາເອນ. ຕາຂອງເຂົາອາດມອງຜ່ານແກ້ວຕາ (lens) ອັນບົກຜ່ອງຂອງເຂົາ. <u>ການປຽບທຽບເປັນບໍ່ເກີດແຫ່ງວິນຍານຕິຕຽນ.</u>

ນຶ່ງໃນຜົນທີ່ເສົ້າໃຈຂອງການປຽບທຽບແລະການຕິຕຽນແມ່ນການທໍາລາຍການຮ່ວມສັມພັນທີ່ພວກເຮົາຕັ້ງໃຈຈະແບ່ງປັນກັນຄືກັບກາອິນໄດ້ເຣັດຕໍ່ອາເບັນ, ການປຽບທຽບນໍາສູ່ການແຕກແຍກຂອງການອອກແບບການເຂົ້າສນິດກັບຄົນອື່ນ. ຜົນຂອງວິນຍານການຕິຕຽນທໍາລາຍພວກເຮົາທັງເຮັດໃຫ້ຜູ້ອື່ນເຈັບປວດນໍາ. ມັນຍັງເປັນຜົນກະທົບຕໍ່ຄວາມສັມພັນຂອງເຮົາກັບພຣະຜູ້ເປັນເຈົ້ານໍາ, ເພາະວ່າ, ດັ່ງທີ່ພວກເຮົາຈະໄດ້ເຫັນໃນຂໍ້ຕໍ່ໄປ, ພຣະເຈົ້າກໍໄດ້ຍິນສຽງຕິຕຽນຂອງເຂົາຕໍ່ໂມເຊ ແລະ ພຣະອົງມີບາງສິ່ງບາງຢ່າງທີ່ຈະຕ້ອງເວົ້າ.

## 2. <u>ຈົດບັນຊີ 12:4-9.</u>

*4 ທັນໃດນັ້ນ ພຣະຜູ້ເປັນເຈົ້າກ່າວກັບໂມເຊແລະອາໂຣນກັບມີຣີອາມວ່າ "ເຈົ້າທັງສາມຈົ່ງອອກມາທີ່ຫໍເຕັນສັກສິດແຫ່ງຊຸມນຸມ" ພວກເຂົາທັງສາມກໍອອກມາ. 5 ພຣະຜູ້ເປັນເຈົ້າກໍສະເດັດລົງມາໃນເສົາເມກປະທັບຢູ່ທີ່ປະຕູຫໍເຕັນສັກສິດແຫ່ງຊຸມນຸມຊົງເອີ້ນອາໂຣນແລະມີຣີອາມ ພວກເຂົາທັງສອງກໍມາຢືນຢູ່ຂ້າງໜ້າ. 6 ພຣະອົງກ່າວວ່າ "ຈົ່ງຟັງຖ້ອຍຄໍາຂອງເຮົາຖ້າຈະມີຜູ້ທໍານວາຍຖ້າມກາງພວກເຈົ້າເຮົາພຣະຜູ້ເປັນເຈົ້າຈະສະແດງຕົວແກ່ຜູ້ນັ້ນເປັນນິມິດ ເຮົາຈະເວົ້າກັບລາວທາງຄວາມຝັນ. 7 ສໍາລັບໂມເຊຜູ້ຮັບໃຊ້ຂອງເຮົາກໍບໍ່ເປັນເຊັ່ນນັ້ນ ໃນບໍລິວານທັງໝົດຂອງເຮົາ ລາວເປັນຄົນສັດຊື່. 8 ເຮົາເວົ້າກັບເຂົາປາກຕໍ່ປາກຢ່າງຊັດເຈນ ບໍ່ເວົ້າລີ້ລັບ ແລະລາວກໍໄດ້ເຫັນສັນຖານຂອງພຣະຜູ້ເປັນເຈົ້າ. ເຫດໃດເຈົ້າຈຶ່ງບໍ່ຢ້ານທີ່ຈະເວົ້າຕິຕຽນໂມເຊຜູ້ຮັບໃຊ້ຂອງເຮົາ." 9 ພຣະຜູ້ເປັນເຈົ້າຊົງໂກດຮ້າຍພວກເຂົາຫຼາຍ ແລ້ວສະເດັດໄປ.*

ການປຽບທຽບຂອງມີຣີອາມແລະອາໂຣນກັບໂມເຊໄດ້ປົກບັງສາຍຕາທີ່ສໍາຄັນຂອງເຂົາຊຶ່ງພວກເຂົາເຫັນຊີວິດຜ່ານແກ້ວຕາແຫ່ງການຕິຕຽນ. ພຣະຜູ້ເປັນເຈົ້າຊົງໂກດຮ້າຍພວກເຂົາຫຼາຍຍ້ອນການຕິຕຽນຂອງເຂົາ ພຣະອົງຈຶ່ງໄດ້ເອີ້ນເຂົາອອກມານອກ, ພ້ອມກັບໂມເຊ,

ສູ່ຫໍເຕັນສັກສິດບ່ອນຊຸມນຸມ. ຖ້າພວກທ່ານເຄີຍໄດ້ຍິນຄໍາວ່າ, "ເຈົ້າຈົ່ງຖ້າຈົນພໍ່ຂອງເຈົ້າມາບ້ານ" ຫຼື "ເຈົ້າຈົ່ງຕົງໄປຫາຫ້ອງການຜູ້ອໍານວຍການດຽວນີ້," ທ່ານອາດຈະເຂົ້າໃຈສິ່ງທີ່ອາໂຣນແລະມີຣີອາມກໍາລັງຈະປະສົບ.

ພຣະຜູ້ເປັນເຈົ້າໄດ້ເລີ່ມຕົ້ນໂດຍການຈໍາແນກໂມເຊຈາກຜູ້ທໍານວາຍອື່ນໆທັງໝົດ. ພຣະອົງໄດ້ອະທິບາຍເຖິງຄວາມໃກ້ຊິດຂອງຄວາມສໍາພັນຂອງພວກເຂົາ. ໂມເຊໄດ້ຮັບຄວາມຮູ້ທີ່ມີປະສົບການກ່ຽວກັບການສະຖິດນໍາຂອງພຣະເຈົ້າທີ່ບໍ່ເໝືອນຄົນອື່ນ. *"ພຣະຜູ້-ເປັນເຈົ້າຊົງສົນທະນາກັບໂມເຊໜ້າຕໍ່ໜ້າເໝືອນມິດສະຫາຍສົນທະນາກັນ"(ອພຍ 33:11ກ).* ໂມເຊເປັນຜູ້ທໍານວາຍ, ແຕ່ເພິ່ນເປັນເກີນກວ່າຜູ້ທໍານວາຍທັມມະດາ. ຈຸດນີ້ອາດຈະບໍ່ໄດ້ສູນເສັຽໄປກັບມີຣີອາມແລະອາໂຣນ, ຜູ້ນໍາສອງຄົນໄດ້ກ່າວທໍານວາຍເພື່ອພຣະຜູ້ເປັນເຈົ້າ. ເຖິງແມ່ນເປັນຜູ້ທໍານວາຍ, ເຂົາບໍ່ຮູ້ພຣະເຈົ້າຄືກັບໂມເຊຮູ້ພຣະເຈົ້າ. ສະນັ້ນ, ເວລາມີຣີອາມແລະອາໂຣນຕິຕຽນໂມເຊ, ເຂົາບໍ່ພຽງແຕ່ໂຈມຕີຄວາມໜ້າເຊື່ອຖືຂອງໂມເຊເທົ່ານັ້ນ; ເຂົາໄດ້ຖາມພຣະເຈົ້າເອງ.

ທັສນະຄະຕິຂອງມີຣີອາມແລະອາໂຣນຕໍ່ໂມເຊກໍເປັນການຕິຕຽນພຣະເຈົ້າ ໃນການແຕ່ງຕັ້ງບຸກຄົນທີ່ພຣະອົງປະສົງໃຫ້ນໍາໄພ່ພົນຂອງພຣະອົງ. ມັນເປັນຕາຕົກໃຈພຽງໃດທີ່ເຂົາຮູ້ເມື່ອວ່າ ການປະພຶດຂອງເຂົາເປັນສາເຫດໃຫ້ເຂົາຕໍ່ຕ້ານພຣະຜູ້ເປັນເຈົ້າ. ແລະຄວາມຕົກໃຈຂອງເຂົາຄວນເປັນເຫດໃຫ້ເຮົາສໍາຫຼວດຫົວໃຈຂອງເຮົາຕໍ່ພຣະພັກພຣະເຈົ້າ. ພວກເຮົາມີໂອກາດເບິ່ງຄືວ່າບໍ່ມີທີ່ສິ້ນສຸດທີ່ຈະເລືອກຍິງລູກດອກແຫ່ງການຕິຕຽນ. ໃນຊ່ວງເວລານັ້ນ, ພວກເຮົາຕ້ອງການຊອກຫາວິນຍານຂອງພຣະເຈົ້າໃນປັນຍາ. ການຕິຕຽນບໍ່ພຽງແຕ່ມີຕົ້ນເຫດມາຈາກຄວາມຊອບໃຈຂອງເຮົາເທົ່ານັ້ນ, ໂດຍສະເພາະຜູ້ທີ່ຖືກຕິຕຽນ. ຄວາມເປັນຈິງອາດຈະຖວາຍກຽດແດ່ພຣະຜູ້ເປັນເຈົ້າແລະນໍ້າພຣະທັຍຂອງພຣະອົງ. ແທນທີ່ຈະຕິຕຽນ, ພວກເຮົາສົມຄວນຂອບຄຸນພຣະເຈົ້າທີ່ພຣະອົງຊົງທໍາພຣະຣາຊກິດຂອງພຣະອົງ, ເຖິງແມ່ນເບິ່ງຄືແຕກຕ່າງຈາກສິ່ງທີ່ເຮົາຢາກໃຫ້ພຣະອົງເຮັດ.

*ມີຣາຄາຫຍັງແດ່ທີ່ພວກເຮົາຕ້ອງຈ່າຍສໍາລັບການມີວິນຍານຕິຕຽນ?*

## 3. <u>ຈົດບັນຊີ 12:10-14</u>.

*10 ເມື່ອເມກລອຍພົ້ນຫໍເຕັນສັກສິດໄປ ເບິ່ງແມ ມີຣີອາມກໍເປັນພະຍາດຂີ້ທູດຂາວດັ່ງຫິມະ ອາໂຣນຫັນໄປເບິ່ງມີຣີອາມແລະເບິ່ງ*
*ແມ ນາງເປັນພະຍາດຂີ້ທູດ. 11 ແລະອາໂຣນເວົ້າກັບໂມເຊວ່າ "ຂ້າແດ່ເຈົ້ານາຍຂອງຂ້ານ້ອຍເອີຍ ຂໍຢ່າລົງໂທດບາບເຮົາທັງສອງ*
*ທີ່ໄດ້ເຮັດໄປດ້ວຍຄວາມໂງ່ຈ້າ ແລະບາບເຊັ່ນນີ້. 12 ຂໍຢ່າໃຫ້ມີຣີອາມເປັນເໝືອນຄົນທີ່ຕາຍແລ້ວ ດັ່ງຄົນທີ່ເກີດຈາກມົດລູກແມ່ແລ້ວ*
*ມີເນື້ອກຸດຫາຍໄປເຄິ່ງນຶ່ງ." 13 ແລະໂມເຊໄດ້ຮ້ອງທູນພຣະຜູ້ເປັນເຈົ້າວ່າ "ຂ້າແດ່ພຣະເຈົ້າ ຂໍພຣະອົງຊົງຮັກສານາງ ຂ້າພຣະອົງ*
*ທູນອ້ອນວອນຕໍ່ພຣະອົງ." 14 ແຕ່ພຣະຜູ້ເປັນເຈົ້າຊົງກ່າວກັບໂມເຊວ່າ "ຖ້າພໍ່ຂອງນາງຖົ່ມນໍ້າລາຍໃສ່ໜ້ານາງ ນາງຈະອັບອາຍຢູ່ເຈັດ*
*ມື້ບໍ່ແມ່ນຫລື? ຈົ່ງກັກນາງໄວ້ນອກຄ້າຍເຈັດມື້ຫລັງຈາກນັ້ນຈຶ່ງໃຫ້ກັບເຂົ້າມາໄດ້."*

ສິ່ງຕ່າງໆເບິ່ງຄືວ່າບໍ່ສວຍງາມ, ໂດຍສະເພາະສໍາລັບມີຣີອາມ. ມີນັກວິຊາການບາງຄົນມີຄວາມເຫັນວ່າ, ມັນອາດບໍ່ແມ່ນໂດຍບັງເອີນ, ທີ່ການລົງໂທດມີຣີອາມພາໃຫ້ຜີວໜັງຂອງນາງກາຍເປັນຂີ້ທູດສີຂາວ ຍ້ອນວ່າການຕິຕຽນຂອງລາວແມ່ນພົວພັນກັບໂມເຊແລະຜີວໜັງທີ່ເຂັ້ມກວ່າຂອງພັລຍາຂອງເພິ່ນ. ການຮູ້ຈັກວ່າຄວາມສໍາພັນໃກ້ຊິດຂອງໂມເຊກັບພຣະຜູ້ເປັນເຈົ້າ, ອາໂຣນໄດ້ຖ່ອມຕົວລົງແລະເປັນທີ່ພໍໃຈຜູ້ທີ່ເພິ່ນຕິຕຽນນັ້ນ. ໂມເຊໄດ້ສະແດງຄວາມຖ່ອມໃຈໂດຍການອ້ອນວອນຂໍການປິ່ນປົວໃນນາມຜູ້ທີ່ຕິຕຽນເພິ່ນ. ພຣະເຈົ້າໄດ້ຕອບຄໍາອ້ອນວອນຂອງເພິ່ນແລະໄດ້ຮັກສາມີຣີອາມໃຫ້ຫາຍດີ.

*ທ່ານຮູ້ບຸນຄຸນອັນໃດກ່ຽວກັບຄໍາແນະນໍາຂອງພຣະຜູ້ເປັນເຈົ້າຕໍ່ໂມເຊກ່ຽວກັບມີຣີອາມ?*

ມີຣີອາມໄດ້ເຮັດບາບ ແຕ່ນາງໄດ້ພົບກັບພຣະເຈົ້າແຫ່ງຄວາມເມດຕາ ຊຶ່ງໄດ້ຕ້ອນຮັບນາງສູ່ບ້ານ. ຫຼາຍກວ່າຄວາມສໍາຄັນຂອງການປິ່ນປົວຮ່າງກາຍຂອງນາງອີກ, ມີຣີອາມຍັງໄດ້ປະສົບກັບການປອງດອງຂອງຄວາມສໍາພັນຂອງນາງຊຶ່ງສາມາດຖືກແຍກຂາດຈາກກັນ

ດ້ວຍໃບພັດແຫ່ງການຕິຕຽນນີ້. ມໍຣະດົກຂອງມີຣີອາມສາມາດເປັນຜູ້ທີ່ພະຍາຍາມກະຕຸ້ນການກະບົດໂດຍການຕິຕຽນໂມເຊ. ແຕ່ແລ້ວ, ຕໍ່ມານາງບໍ່ໄດ້ຈື່ຈຳວິນຍານການຕິຕຽນຂອງນາງເລີຍ, ຈື່ໄດ້ແຕ່ບົດບາດການນຳຂອງນາງ. ເຮົາໄດ້ນຳພວກເຈົ້າອອກຈາກປະເທດເອຢິບເຮົາໄດ້ໄຖ່ພວກເຈົ້າອອກຈາກການເປັນຂ້ອຍຂ້າ ເຮົາໄດ້ສົ່ງໂມເຊ ອາໂຣນແລະນາງມີຣີອາມ ເພື່ອເປັນຜູ້ນຳພາພວກເຈົ້າ(ມີກາ 6:4). ຈົນກະທັ້ງ, ຫຼັງຈາກສິ່ງທີ່ນາງໄດ້ກະທຳລົງໄປແລ້ວ, ໜ້າທີ່ມອບໝາຍຂອງມີຣີອາມແມ່ນເປັນຜູ້ນຳພັນທະກິດຂອງພຣະເຈົ້າຄື ເພື່ອກູ້ພັຍໄພ່ພົນຂອງພຣະອົງຈາກການເປັນທາດ!

ເຣື່ອງລາວຂອງມີຣີອາມໃຫ້ຄວາມຫວັງແກ່ເຮົາ. ເມື່ອພວກເຮົາສາຣະພາບບາບຂອງພວກເຮົາ ມັກຈະມີຂ່າວດີທີ່ຍິນດີຕ້ອນຮັບເຮົາກັບບ້ານ. ຂ່າວດີແມ່ນວ່າພວກເຮົາມີພຣະຜູ້ໂຜດໃຫ້ພົ້ນ ຜູ້ທີ່ເຮັດໃຫ້ເນື້ອໜັງຂອງພຣະອົງບອບຊໍ້າເພື່ອພວກເຮົາຈະໄດ້ຮັບການປິ່ນປົວໃຫ້ຫາຍດີ. ພວກເຮົາຖືກນຳມາຫາພຣະຄຣິດແລະຄົວເຮືອນຂອງພຣະອົງຄື: ຄອບຄົວໃນຄວາມເຊື່ອ.

*ກຸ່ມຂອງພວກເຮົາສວມບົດບາດຫຍັງໃນການປ້ອງກັນຊຶ່ງກັນແລະກັນຈາກວິນຍານການຕິຕຽນ?*

## ນຳໃຊ້ໃນຊີວິດ

ຈົ່ງປ້ອງກັນຫົວໃຈຂອງທ່ານຈາກການຕິຕຽນຄົນອື່ນ. ຈົ່ງເລືອກການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ລົງໄປນີ້:

- **ຈົ່ງສັດຊື່ຕໍ່ຕົວທ່ານເອງ.** ຈົ່ງປະເມີນຫົວໃຈຂອງທ່ານເອງ ສຳລັບການຟ້ອງຄົນອື່ນ.ຈົ່ງຂໍໃຫ້ພຣະເຈົ້າເປີດເຜີຍບ່ອນທີ່ທ່ານອາດປຽບທຽບຕົນເອງໃສ່ຄົນອື່ນ. ບາດກ້າວທີນຶ່ງແມ່ນແນມເຫັນຕົວເອງດັ່ງທີ່ພຣະເຈົ້າແນມເຫັນທ່ານ.
- **ຈົ່ງໜູນໃຈຄົນອື່ນ:** ເມື່ອໃຈຂອງເຮົາມີຄວາມສ່ຽງທີ່ຈະຕິຕຽນ, ແທນທີ່ຈະຕິ ໃຫ້ເຮົາເລືອກຊອກຫາໃຜຜູ້ນຶ່ງເພື່ອໜູນໃຈ. ໂດຍຕັ້ງໃຈໃຫ້ເຂົາຮູ້ວ່າເຂົານຳພຣະພອນມາສູ່ທ່ານຢ່າງໃດ.
- **ຈົ່ງສາຣະພາບການຕິຕຽນຂອງທ່ານຕໍ່ຄົນອື່ນ.** ທ່ານເຄີຍຕິຕຽນຄົນອື່ນໃນທາງເສື່ອມເສັຽບໍ່? ພຣະຜູ້ເປັນເຈົ້າອາດດົນໃຈທ່ານຂໍຮ້ອງຄົນນັ້ນໃຫ້ອະພັຍທ່ານ ແລະກ້າວສູ່ບາດກ້າວແຫ່ງການປອງດອງກັນ.

ໃນໂລກທີ່ປ້ອນການຕິຕຽນເພື່ອທຳລາຍກັນ, ທາງທີ່ມີຣິດອຳນາດທີ່ສຸດທີ່ພວກເຮົາສາມາດສະແດງຄວາມຈິງຂອງພຣະທັມຂ່າວປະເສີດແມ່ນສະແດງໃຫ້ເຫັນວ່າພຣະເຢຊູໄດ້ປົວແປງເຮົາຢ່າງໃດ. ພວກເຮົາມີແນວໂນ້ມມັກຕິຕຽນ. ແຕ່ພວກເຮົາສາມາດຮັບການປົວແປງໂດຍຣິດອຳນາດແລະພຣະຄຸນຂອງພຣະເຈົ້າສູ່ບຸກຄົນສົມຄວນໄດ້ຮັບການປອງດອງ. ຂນະທີ່ໂລກທຳລາຍ, ໃຫ້ພວກເຮົາສະແດງພຣະທັມຂ່າວປະເສີດໄດ້ອຳນວຍໃຫ້ເຮົາເສີມສ້າງຊຶ່ງກັນແລະກັນຂຶ້ນໃໝ່ຢ່າງໃດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**